ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------ຜຜຜຜຜ ☆ ໝໝໝໝໝ--------

ເລກທີ 60 /ນຍ

*ນະຄອນຫຼວງວຽງຈັນ, ວັນທີ 24 ມັງກອນ 2007*

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ຂໍ້ຕົກລົງ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 33/ນຍ ແລະ 35/ນຍ, ລົງວັນທີ 28 ມິຖຸນາ 2006;
- ອີງຕາມ ແຈ້ງການ ຂອງ ຫ້ອງວ່າການສູນກາງພັກ ສະບັບເລກທີ 636/ຫສພ, ລົງວັນທີ 31 ຕຸລາ 2006;
- ອີງຕາມ ໃບສະເໜີ ຂອງ ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ /ທປຄ.ກພລ, ລົງວັນທີ ມັງກອນ 2007.

## ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ

## ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ຂອງ ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ເພື່ອເປັນບ່ອນອີງໃນດ້ານນິຕິກຳ ໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຊີ້ນຳດັ່ງກ່າວ ແລະ ແນໃສ່ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃນຂອບເຂດທົ່ວປະເທດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ຊຶ່ງຂຽນເປັນຕົວອັກສອນຫຍໍ້ດ້ວຍຕົວອັກສອນລາວວ່າ: **"ຄ.ພ.ທ.ຊ"** ແມ່ນຄະນະໜຶ່ງ ທີ່ຂຶ້ນກັບລັດຖະບານ, ມີພາ

ລະບົດບາດຊ່ວຍລັດຖະບານ ແລະ ນາຍົກລັດຖະມົນຕີ ໃນການປະສານງານ, ຄົ້ນຄວ້າ-ສັງລວມ ບັນດາທິດທາງ, ແຜນງານ, ໂຄງການ ຂອງ ບັນດາກະຊວງ, ອົງການ ແລະ ອຳນາດການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກ ເພື່ອສະເໜີລັດຖະບານພິຈາລະນາຮັບຮອງ ພ້ອມທັງຕິດຕາມ, ຊຸກຍູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນທົ່ວປະເທດ ໃຫ້ເປັນໄປຕາມແນວທາງ, ແຜນນະໂຍບາຍທີ່ວາງອອກ. ປຸກລະດົມ, ຂົນຂວາຍແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອແກ້ໄຂຄວາມທຸກຍາກ ຂອງ ປະຊາຊົນ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

3.1 ຊີ້ນຳ, ປະສານງານກັບພາກສ່ວນກ່ຽວຂ້ອງສ້າງແຜນຍຸດທະສາດການລົງທຶນໄລຍະຍາວ, ໄລຍະກາງ ແລະ ປະຈຳປີກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເພື່ອນຳສະເໜີຄະນະກຳມະການແຜນການ ແລະ ການລົງທຶນ (ຄ.ຜ.ທ) ພິຈາລະນາເອົາເຂົ້າແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ;

3.2 ຊຸກຍູ້ຂະແໜງການ ແລະ ທ້ອງຖິ່ນ ໃນການຄົ້ນຄວ້າຫັນເອົາທິດທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ ລວມມີ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ຍຸດທະສາດ ເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ໃຫ້ກາຍເປັນແຜນງານສະເພາະ ແລະ ໂຄງການລະອຽດ ເພື່ອສຸມໃສ່ພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຕາມເປົ້າໝາຍທີ່ພັກ ແລະ ລັດຖະບານ ໄດ້ວາງອອກ;

3.3 ເປັນໃຈກາງໃນການປະສານສົມທົບ, ສ້າງເງື່ອນໄຂສະດວກ ແລະ ຊຸກຍູ້ຂະແໜງການ ຫຼື ອົງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນຢ່າງມີປະສິດທິພາບ;

3.4 ຊີ້ນຳ, ແນະນຳບັນດາພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດບັນດາວຽກງານພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກ;

3.5 ຕິດຕາມໂຄງການລົງທຶນຂອງລັດ ລວມທັງທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ ທີ່ສະໜັບສະໜູນໃຫ້ແກ່ການພັດທະນາຊົນນະບົດ, ການຍຸດຕິການຖາງປ່າເຮັດໄຮ່, ການຈັດສັນອາຊີບຄົງທີ່ໃຫ້ແກ່ປະຊາຊົນ ແລະ ຫຼຸດຜ່ອນຄວາມທຸກຍາກ ເພື່ອສະຫຼຸບສັງລວມໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ ສັງລວມເຂົ້າໃນບົດລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ;

3.6 ປະສານກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ, ສ້າງບັນດານະໂຍບາຍສົ່ງເສີມ, ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດເຂົ້າໃສ່ການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ;

3.7 ຊີ້ນໍາການຈັດຕັ້ງປະຕິບັດ ບັນດາໂຄງການພັດທະນາຊົນນະບົດ ລວມທັງການຢຸດຕິການຖາງປ່າເຮັດໄຮ່, ຈັດສັນອາຊີບຄົງທີ່ ແລະ ຫຼຸດຜ່ອນຄວາມທຸກຍາກ ທີ່ມີລັກສະນະພົວພັນ ເຖິງຫຼາຍຂະແໜງການໃນວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເປັນຕົ້ນແມ່ນກອງທຶນຫຼຸດຜ່ອນຄວາມທຸກຍາກ (ທ.ລ.ຍ), ກອງທຶນພັດທະນາຂັ້ນບ້ານ (ກ.ພ.ບ) ແລະ ກອງທຶນອື່ນໆທີ່ພົວພັນເຖິງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;

3.8 ຊີ້ນໍາ, ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ, ເກັບກໍາສັງລວມບັນດາຂໍ້ມູນສະຖິຕິ ແລະ ສະຫຼຸບລາຍງານຢ່າງເປັນລະບົບ ແລະ ປົກກະຕິ ກ່ຽວກັບສະພາບການຈັດຕັ້ງປະຕິບັດບັນດາກອງທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຕ່າງໆ ຢ່າງມີປະສິດທິຜົນສູງ;

3.9 ຈັດຕັ້ງການຝຶກອົບຮົມຕ່າງໆ ເພື່ອສ້າງຄວາມສາມາດໃຫ້ແກ່ພະນັກງານທີ່ຄຸ້ມຄອງແຜນງານ ແລະ ໂຄງການທີ່ແນໃສ່ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ລວມທັງໜ່ວຍງານຕ່າງໆທີ່ກ່ຽວຂ້ອງ;

3.10 ສຶກສາອົບຮົມແນວຄິດ, ປັບປຸງບູລະນະກົງຈັກການຈັດຕັ້ງ, ກໍ່ສ້າງ ແລະ ບໍາລຸງຍົກລະດັບວິຊາສະເພາະໃຫ້ພະນັກງານ-ລັດຖະກອນ ທີ່ຂຶ້ນກັບຄວາມຮັບຜິດຊອບຄຸ້ມຄອງຂອງຕົນ;

3.11 ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກໃນທົ່ວປະເທດ ລາຍງານຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ແຕ່ລະໄລຍະ ແລະ ເປັນປົກກະຕິ; ຈັດຕັ້ງສະຫຼຸບຖອດຖອນບົດຮຽນຮ່ວມກັບຂະແໜງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກໃນແຕ່ລະໄລຍະ;

3.12 ຂື້ນແຜນງົບປະມານປະຈໍາປີ, ຄຸ້ມຄອງ, ນໍາໃຊ້ງົບປະມານ ແລະ ຊັບສິນບັດຂອງລັດ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນຕາມລະບຽບການ ທີ່ໄດ້ກໍານົດໄວ້;

**ມາດຕາ 4. ຂອບເຂດສິດ**

ຄະນະຊີ້ນໍາພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ມີຂອບເຂດສິດດັ່ງນີ້:

4.1 ອອກລະບຽບການ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ມາດຕະການຕ່າງໆ ທີ່ນອນຢູ່ໃນພາລະບົດບາດ ແລະ ໜ້າທີ່ຂອງຕົນ;

4.2 ເລືອກເຟັ້ນ, ຈັດຮຽງບຸລິມະສິດບັນດາໂຄງການ ທີ່ສະໜັບສະໜູນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເພື່ອນໍາສະເໜີຄະນະກໍາມະການແຜນການ ແລະ ການລົງທຶນ ພິຈາລະນາ ຈັດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

4.3 ດໍາເນີນການເຈລະຈາ, ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຕ່າງໆ ກັບພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ ກ່ຽວກັບການຮັບເອົາການຊ່ວຍເຫຼືອຕ່າງໆ ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;

4.4 ເຊື້ອເຊີນພາກສ່ວນທີ່ກ່ຽວຂ້ອງຈາກຂະແໜງການ ແລະ ທ້ອງຖິ່ນ ເພື່ອເຂົ້າມາລາຍງານ ຫຼື ຮ່ວມປະຊຸມປຶກສາຫາລື ບັນດາບັນຫາທີ່ພົວພັນກັບພາລະບົດບາດ ແລະ ໜ້າທີ່ຂອງຕົນ; ທວງເອົາບົດສະຫຼຸບ, ຂໍ້ມູນຂ່າວສານ, ສະຖິຕິ ແລະ ເອກະສານທາງການຕ່າງໆ ທີ່ກ່ຽວຂ້ອງກັບການຈັດຕັ້ງປະ

ຕິບັດໂຄງການທີ່ສະໜັບສະໜູນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃນຂອບເຂດທົ່ວປະເທດ;

4.5 ເຂົ້າຮ່ວມປະຊຸມຢູ່ພາຍໃນ ຫຼື ຕ່າງປະເທດ ທີ່ພົວພັນກັບພາລະບົດບາດ ແລະ ໜ້າທີ່ຂອງຕົນ ຕາມການເຊື້ອເຊີນ;

4.6 ແຕ່ງຕັ້ງ, ເລື່ອນຂັ້ນ, ຍົກຍ້າຍ, ສັບຊ້ອນໜ້າທີ່, ຄຸ້ມຄອງ, ກໍ່ສ້າງ, ນຳໃຊ້, ຍ້ອງຍໍ, ປົດຕຳແໜ່ງ, ປະຕິບັດວິໄນ ຕໍ່ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

4.7 ຕົກລົງສ້າງຕັ້ງ, ປັບປຸງ ແລະ ຍົກເລີກໜ່ວຍງານສະເພາະກິດ, ບັນດາພະແນກ ຂອງຫ້ອງການປະຈຳການຂອງ ຄ.ພ.ທ.ຊ ຂັ້ນສູນກາງ ແລະ ປະກອບຄວາມເຫັນໃສ່ການຕົກລົງສ້າງຕັ້ງ, ປັບປຸງ ແລະ ຍົກເລີກໜ່ວຍງານສະເພາະກິດຕ່າງໆ ຂອງຫ້ອງການ ຄ.ພ.ທ ຂັ້ນແຂວງ ແລະ ຂັ້ນເມືອງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງ ຄ.ພ.ທ.ຊ ປະກອບມີຮອງນາຍົກລັດຖະມົນຕີ 01 ທ່ານ ເປັນປະທານ, ມີຮອງປະທານຈຳນວນໜຶ່ງເປັນຜູ້ປະຈຳການ ແລະ ມີບັນດາກຳມະການທີ່ເປັນຜູ້ຕາງໜ້າຈາກກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການຕ່າງໆ ທີ່ກ່ຽວຂ້ອງ.

ປະທານ ຄ.ພ.ທ.ຊ ມີໜ້າທີ່ອຳນວຍຄວບຄຸມທຸກການເຄື່ອນໄຫວ ຂອງ ຄ.ພ.ທ.ຊ ແລະ ເປັນຜູ້ຮັບຜິດຊອບໂດຍກົງ ຕໍ່ ລັດຖະບານ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ຄ.ພ.ທ.ຊ ຕາມທີ່ກຳນົດ ຢູ່ໃນມາດຕາ 2, 3 ແລະ 4 ຂອງ ດຳລັດສະບັບນີ້.

ຮອງປະທານ ຄ.ພ.ທ.ຊ ເປັນຜູ້ຊ່ວຍວຽກປະທານ ໃນການອຳນວຍຄວບຄຸມວຽກງານຕ່າງໆ ຂອງ ຄ.ພ.ທ.ຊ ແລະ ໄດ້ຮັບມອບໝາຍໃຫ້ຮັບຜິດຊອບຊີ້ນຳວຽກງານໃດໜຶ່ງ ຂອງ ຄ.ພ.ທ.ຊ.

ສຳລັບຢູ່ທ້ອງຖິ່ນ ແມ່ນໃຫ້ຄະນະພັກ, ອຳນາດການປົກຄອງ ຮັບຜິດຊອບ ໂດຍຖືເອົາຫ້ອງວ່າການແຂວງ, ນະຄອນ ແລະ ເມືອງ, ເທດສະບານ ເປັນອົງການຊ່ວຍວຽກ.

**ມາດຕາ 6. ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງ ຄ.ພ.ທ.ຊ ປະກອບມີ:

1. ກອງທຶນຫຼຸດຜ່ອນຄວາມທຸກຍາກ;
2. ຫ້ອງການ. ໃນຫ້ອງການປະກອບມີ 3 ພະແນກ ຄື:
   - ພະແນກ ບໍລິຫານ, ແຜນການ ແລະ ພົວພັນຕ່າງປະເທດ;
   - ພະແນກ ລຶບລ້າງຄວາມທຸກຍາກ;
   - ພະແນກ ພັດທະນາຊົນນະບົດ.

ຫົວໜ້າຫ້ອງການ ຄ.ພ.ທ.ຊ ມີຕຳແໜ່ງບໍລິຫານເທົ່າຫົວໜ້າກົມ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງ ປະທານ ຄ.ພ.ທ.ຊ

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7.** ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ເຄື່ອນໄຫວວຽກງານຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ແລະ ບຸກຄົນຮັບຜິດຊອບ; ປະຕິບັດຕາມພາລະບົດບາດຊີ້ນຳມະຫາພາກ, ເປັນບ່ອນປະສານງານກັບໜ່ວຍງານຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ ເຮັດວຽກຕາມແຜນການ, ແຜນງານ ແລະ ໂຄງການ ທີ່ຕິດພັນກັບການພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນ, ມີການປະຊຸມສະຫຼຸບຖອດຖອນບົດຮຽນ ແລະ ລາຍງານສ່ອງແສງໃຫ້ລັດຖະບານຢ່າງເປັນປົກກະຕິ; ທຸກການເຄື່ອນໄຫວຂອງຄະນະດັ່ງກ່າວ ແມ່ນແນໃສ່ຊຸກຍູ້-ສົ່ງເສີມ ໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ມີຄວາມເປັນເຈົ້າການ ໃນການປະຕິບັດວຽກງານວິຊາສະເພາະຂອງຕົນ ຢ່າງມີປະສິດທິຜົນ, ຫຼີກເວັ້ນການເຮັດແທນ, ກ້າວກ່າຍ ແລະ ຊໍ້າຊ້ອນວຽກງານກັນ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8.** ໂດຍອີງໃສ່ສະພາບ ແລະ ເງື່ອນໄຂຕົວຈິງໃນແຕ່ລະໄລຍະ, ນາຍົກລັດຖະມົນຕີ ຈະແຕ່ງຕັ້ງບຸກຄະລາກອນ ທີ່ໄດ້ກຳນົດຢູ່ໃນມາດຕາ 5 ຂອງດຳລັດສະບັບນີ້.

**ມາດຕາ 9.** ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ມີງົບປະມານ ແລະ ກາປະທັບ ເພື່ອຮັບໃຊ້ວຽກງານລວມຂອງຕົນ.

**ມາດຕາ 10.** ມອບໃຫ້ປະທານຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ຫ້ອງການ ຄ.ພ.ທ.ຊ ເປັນອັນລະອຽດ.

**ມາດຕາ 11.** ຄະນະເລຂາທິການລັດຖະບານ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12.** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**